LAO PEOPLE'S DEMOCRATIC REPUBLIC

Peace Independence Democracy Unity Prosperity

# DECREE ON POVERTY AND DEVELOPMENT CRITERIA

Published by:

The Lao National Leading Committee for Rural Development and Poverty Eradication

Vientiane Capital, 2009

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ດຳລັດ ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ

ຈັດພິມໂດຍ:

ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ

ນະຄອນຫລວງວຽງຈັນ, 2009

For Further Information:

The Prime Minister's Office
The Lao National Leading Committee for Rural Development and Poverty Eradication

LaneXang Avenue, Vientiane Capital, Lao PDR
Tel/Fax: 021 264 392
E-mail: comrdpe@hotmail.com; www.laordpe.gov.la

**Lao People's Democratic Republic**
**Peace Independence Unity Democracy Prosperity**

**Prime Minister's Office**

**No. 285/PM**
**Vientiane Capital, 13th October 2009**

# DECREE
# on Poverty and Development Criteria for 2010-2015

- Referring to the Law on the Government of the Lao PDR No. 02/NA dated 6th May 2003;

- Referring to the National Leading Committee for Rural Development and Poverty Eradication request No.116/NLCRDPE dated 28th September 2009;

## THE PRIME MINISTER OF THE LAO PDR ISSUES:

## PART I: General Provision

**Article 1: Objectives**

This decree defines the Poverty Criteria, Development Criteria, the implementation process and methodology, the responsible organizations, the procedure of the request and approval for the status of Non-poor and Developed Household, Village and District, in order to facilitate the uniformly implementation of various sectors and authorities, national as well as local throughout the country.

**Article 2: Definition of "Poverty" and "Development"**

Poverty is the deprivation of basic needs for the daily livelihood such as shortage of food that cannot provide the energy of 2100 Kcal/day/person; deprivation of clothes and durable shelter; inability to afford for the health care in case of sickness; inability to afford for the elementary education; inability to have the access to public services.

Development is the integrated success in development such as strong and firm institutional system, well-developed political awareness of people, firm social order and security, continuously well-developed socio-economic infrastructure, people's access to the public services and living out of poverty.



## PART II: Poverty Criteria

**Article 3: Individual's Poverty Criteria**

The Poverty measurement basis is the monthly per capita income regardless gender, age and taking the national currency as the measurement unit:

1. National average: 192 000 kip/month/person.
2. Rural average: 180 000 kip/month/person
3. Urban average: 240 000 kip/month/person.

**Article 4: Household's Poverty Criteria**

Considered as Poor Household, any household that has an average monthly per capita income below the Individual's Poverty Criteria mentioned in Article 3 of this Decree.

**Article 5: Village's Poverty Criteria**

Considered as Poor Village, any village that lacks of the foundamental conditions for the development as the following:

1. 51% and more of households within the village are considered as Poor Households.
2. No primary school, children schooling in the nearest village take more than one walking-hour.
3. No health care net such as drug revolving fund, drug store; villager going to the nearest health center or district's hospital takes more than two walking- hours.
4. No clean water available.
5. No all-weather road access.

**Article 6: District's Poverty Criteria**

Considered as Poor District, any district that has 51% and more of Poor Villages within the district.

# PART III
# Development Criteria

**Article 7: Developed Household's Criteria**

Considered as Developed Household, any household that meets the following criteria:

1. All household members develop a political awareness, and a respect for the law.
2. The household shows internal solidarity and solidarity with outside, and is certified as a Legal Case Free Household and as a Drug Free Household.
3. Certified as a Non Poor Household with secure income resource(s).
4. Certified as a Cultural Household
5. Certified as a Health Care Model Household.
6. All household members at schooling age complete the primary school.
7. The household enjoys electricity consumption.

**Article 8: Developed Village's Criteria.**

Certified as Developed Village, any village that meets the folowing Development Criteria:

1. Strong village leadership.
2. All villagers develop a political awareness, a respect for the law and show internal solidarity and solidarity with outside.
3. Certified as a Legal Case Free Village and as a Drug Free Village ensuring the social security .
4. More than 85% of the households are certified as Developed Households.
5. The Village has production Collective(s) and production/ services group(s), revolving fund(s).
6. All villagers have permanent domicile and stable living resource(s).



7. The village has a good urbanism plan.
8. The village has access to all-weather road.
9. More than 70% of the households enjoy main electricity consumption.
10. Certified as a Health Care Model Village.
11. Certified as a Completed Primary Education Village.
12. Certified as a Cultural Village.
13. The village has an office, hall, sport yard and any other basic facilities where the village's activities can be conducted.

**Article 9: Developed Kumban's Criteria**

Considered as Developed Kumban, any Kumban that meets the folowing Development Criteria:

1. More than 85% of the total villages within the Kumban are certified as Developed Villages.
2. The Koumban has social order and security.
3. The Koumban has a good urbanism plan and develops accordingly to the plan.
4. The Koumban has at least a permanent market.
5. The Koumban has at least a post office or a telecommunication network.
6. The Koumban has a technical center(s).
7. The Koumban has a health center(s).
8. The Koumban has a secondary school(s).
9. The Koumban has an office, a hall, or a cultural center, and other basic facilities.

**Article 10: Developed District's Criteria**

Certified as a Developed District, any district that meets the following Development Criteria:

1. At least 85% of the villages within the district are certified as Developed Villages.
2. The district municipality has a good urbanism plan and develops accordingly to the urbanism regulations and plan.

# PART IV
# Methodology

### Article 11: Criteria rectification and change

If it is required, the criteria can be rectified and changed as the following:

1. Poverty Criteria will be rectified and adjusted accordingly to the inflation rate and living costs.
2. The Development Criteria will be rectified and adjusted along with the National Socio-Economic Development Plan (NSEDP), except for the time of significant socio-economic fluctuation.
3. The National Leading Committee for Rural Development and Poverty Eradication as the focal point coordinating with the line ministries has to analyse, and prepare the adjustment of the Poverty Criteria and the Development Criteria, and submit for the Government's approval.
4. Once every five years, at the end of the NSEDP, the criteria review, monitoring and evaluation will be conducted.

### Article 12: Request for certification, certification process and approval

At the household level, the request for certification of the Non-Poor status, Developed status is the responsibility of the NaiBan (village head) addressing to the District Governor who has the authority to approve based on the monitoring and evaluation and the confirmation of the concerned district offices.

At the village level, the request is the responsibility of the District Governor addressing to the Province Governor who has the authority to approve based on the monitoring and evaluation and confirmation of the concerned provincial offices.

At the district level, the request is the responsibility of the Province Governor addressing to the Prime Minister who has the authority to approve based on the monitoring and evaluation and the confirmation of the concerned national sectors.



# PART V
# Last Provisions

### Article 13: Implementation

The National Leading Committee for Rural Development and Poverty Eradication in cooperation with the Ministry of Planning and Investment, is assigned to issue the detailed regulations supporting the implementation of the Decree, and to supervise, monitor and evaluate and yearly report to the Government.

The line ministries, agencies, the Vientiane Capital and different provinces throughout the country are responsible to implement accordingly to their mandate, and yearly report to the National Leading Committee for Rural Development and Poverty Eradication who consolidates and then reports to the Government.

The line ministries, agencies and the local authorities at each level should be aware and actively implement this Decree.

### Article 14: Coming into force

The Decree comes into force since the date of signature. Any previously issued regulations which are in contradiction to this Decree are declared null and void.

**THE PRIME MINISTER OF THE LAO PDR**

**Bouasone Bouphavanh**

ຜູ້ອອກຂໍ້ຕົກລົງຮັບຮອງ, ບົນພື້ນຖານມີການກວດກາ, ປະເມີນຜົນ ແລະ ຢັ້ງຢືນຈາກໜ່ວຍງານຕ່າງໆ ທີ່ກ່ຽວຂ້ອງ ຂອງເມືອງ.

ການສະເໜີ, ຢັ້ງຢືນ ແລະ ຮັບຮອງ ບ້ານພົ້ນທຸກ ແລະ ບ້ານພັດທະນາ ແມ່ນເຈົ້າເມືອງ ເປັນຜູ້ສະເໜີຕໍ່ເຈົ້າແຂວງ ແລະ ເຈົ້າແຂວງ ເປັນຜູ້ອອກຂໍ້ຕົກລົງຮັບຮອງ, ບົນພື້ນຖານມີການກວດກາ, ປະເມີນຜົນ ແລະ ຢັ້ງຢືນຈາກໜ່ວຍງານຕ່າງໆ ທີ່ກ່ຽວຂ້ອງ ຂອງແຂວງ.

ການສະເໜີ, ຢັ້ງຢືນ ແລະ ຮັບຮອງ ເມືອງພົ້ນທຸກ ແລະ ເມືອງພັດທະນາ ແມ່ນເຈົ້າແຂວງ ເປັນຜູ້ສະເໜີຕໍ່ນາຍົກລັດຖະມົນຕີ ແລະ ນາຍົກລັດຖະມົນຕີ ເປັນຜູ້ອອກຂໍ້ຕົກລົງຮັບຮອງ, ບົນພື້ນຖານມີການກວດກາ, ປະເມີນຜົນ ແລະ ຢັ້ງຢືນຈາກໜ່ວຍງານ ທີ່ກ່ຽວຂ້ອງ ຂອງສູນກາງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 13.ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ ສົມທົບກັບກະຊວງແຜນການ ແລະ ການລົງທຶນ ອອກລະບຽບການສະເພາະໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ພ້ອມທັງຕິດຕາມ, ຊຸກຍູ້, ກວດກາ, ປະເມີນຜົນ ແລະ ລາຍງານຜົນການຈັດຕັ້ງປະຕິບັດຕາມມາດຕະຖານ ໃຫ້ລັດຖະບານ ໃນແຕ່ລະປີ.

ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ນະຄອນຫລວງວຽງຈັນ ແລະ ບັນດາແຂວງໃນທົ່ວປະເທດ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງ ຕາມພາລະບົດບາດຂອງຕົນ ແລະ ລາຍງານຜົນການຈັດຕັ້ງ ປະຕິບັດ ໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ ເປັນແຕ່ລະປີ ເພື່ອສັງລວມລາຍງານຕໍ່ລັດຖະບານ.



ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໃນທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 14. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ

12. ໄດ້ປະກາດ ເປັນບ້ານ ວັດທະນະທຳ;

13. ມີຫ້ອງການ, ສະໂມສອນ, ເດີ່ນກິລາ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ທີ່ຮັບໃຊ້ກິດຈະກຳລວມຂອງບ້ານ.

**ມາດຕາ 9. ມາດຕະຖານກຸ່ມບ້ານພັດທະນາ**

**ກຸ່ມບ້ານພັດທະນາ** ແມ່ນກຸ່ມບ້ານທີ່ບັນລຸມາດຕະຖານ, ເງື່ອນໄຂໃນການພັດທະນາດັ່ງນີ້:

1. ມີບ້ານພັດທະນາ ຫລາຍກວ່າ 85% ຂອງຈຳນວນບ້ານທັງໝົດ ຢູ່ພາຍໃນກຸ່ມບ້ານ;
2. ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບໜັກແໜ້ນ;
3. ມີແຜນຜັງກຸ່ມບ້ານທີ່ດີ ແລະ ມີການຈັດຕັ້ງປະຕິບັດຕາມແຜນຜັງ;
4. ມີຕະຫລາດຖາວອນ ທີ່ມີການຊື້-ຂາຍ ເປັນປະຈຳ;
5. ມີລະບົບໄປສະນີ ຫລື ລະບົບໂທລະຄົມມະນາຄົມ;
6. ມີສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້;
7. ມີສຸກສາລາ;
8. ມີໂຮງຮຽນມັດທະຍົມສຶກສາ;
9. ມີຫ້ອງການ, ສະໂມສອນ ຫລື ຫໍວັດທະນະທຳ ແລະ ສິ່ງອຳນວຍຄວາມສະດວກອື່ນໆ.

**ມາດຕາ 10. ມາດຕະຖານເມືອງພັດທະນາ.**

**ເມືອງພັດທະນາ** ແມ່ນເມືອງ ທີ່ບັນລຸມາດຕະຖານ ເງື່ອນໄຂໃນການພັດທະນາດັ່ງນີ້:

1. ມີບ້ານພັດທະນາ ກວມ 85% ຂຶ້ນໄປ;



2. ເທດສະບານເມືອງ ໄດ້ມີແຜນຜັງເມືອງທີ່ດີ ແລະ ມີການຈັດຕັ້ງປະຕິບັດຕາມແຜນຜັງ ຢ່າງເປັນລະບົບຄົບຊຸດຕາມລະບຽບການ ຂອງຂະແໜງການ ທີ່ກ່ຽວຂ້ອງວາງອອກ.

## ໝວດທີ IV
## ວິທີການຈັດຕັ້ງປະຕິບັດ

**ມາດຕາ 11. ການປັບປຸງ ແລະ ການປ່ຽນແປງມາດຕະຖານ**

ວິທີການປັບປຸງ ແລະ ການປ່ຽນແປງມາດຕະຖານ ໃຫ້ປະຕິບັດດັ່ງນີ້:

1. ມາດຕະຖານຄວາມທຸກຍາກ ແມ່ນ ຈະໄດ້ມີການປັບປຸງ ແລະ ປ່ຽນແປງໄປຕາມອັດຕາໄພເງິນເຟີ້ ແລະ ຄ່າຄອງຊີບໃນແຕ່ລະໄລຍະ;
2. ມາດຕະຖານພັດທະນາ ແມ່ນຈະໄດ້ມີການປັບປຸງໃນທຸກໆ 5 ປີ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ ໃນແຕ່ລະໄລຍະ. ນອກຈາກເສດຖະກິດ-ສັງຄົມ ມີການປ່ຽນແປງຢ່າງ ໄວວາ;
3. ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ ເປັນໃຈກາງ ສົມທົບກັບກະຊວງກ່ຽວຂ້ອງຄົ້ນຄ້ວາ, ປັບປຸງມາດຕະຖານຄວາມທຸກຍາກ ແລະ ມາດຕະຖານພັດທະນາ ແລະ ນຳສະເໜີລັດຖະບານ ພິຈາລະນາ;
4. ທຸກໆ 5 ປີ ໃນຕອນທ້າຍຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ ຕ້ອງມີການທົບທວນ, ກວດກາ ແລະ ປະເມີນຜົນລະດັບຊາດ.

**ມາດຕາ 12. ການສະເໜີ, ຢັ້ງຢືນ ແລະ ຮັບຮອງ**

**ການສະເໜີ, ຢັ້ງຢືນ ແລະ ຮັບຮອງ ຄອບຄົວພົ້ນທຸກ ແລະ ຄອບຄົວພັດທະນາ** ແມ່ນນາຍບ້ານ ເປັນຜູ້ສະເໜີ ຕໍ່ເຈົ້າເມືອງ ແລະ ເຈົ້າເມືອງ ເປັນ

4. ບ້ານ ທີ່ບໍ່ມີນໍ້າສະອາດຊົມໃຊ້;

5. ບ້ານ ທີ່ບໍ່ມີເສັ້ນທາງຄົມມະນາຄົມເຂົ້າເຖິງ ຫລື ມີແຕ່ທຽວໄດ້ລະດູດຽວ.

**ມາດຕາ 6. ມາດຕະຖານຄວາມທຸກຍາກຂັ້ນເມືອງ**

ເມືອງ ທີ່ຈັດວ່າທຸກຍາກ ແມ່ນເມືອງ ທີ່ມີບ້ານທຸກຍາກກວມ 51% ຂຶ້ນໄປ ຂອງຈຳນວນ ບ້ານທັງໝົດ ພາຍໃນເມືອງ.

## ໝວດທີ III
## ການກຳນົດມາດຕະຖານພັດທະນາ

**ມາດຕາ 7. ມາດຕະຖານຄອບຄົວພັດທະນາ**

ຄອບຄົວພັດທະນາ ແມ່ນຄອບຄົວທີ່ບັນລຸມາດຕະຖານ, ເງື່ອນໄຂໃນການພັດທະນາ ດັ່ງນີ້:

1. ສະມາຊິກພາຍໃນຄອບຄົວ ມີຄວາມຕື່ນຕົວທາງດ້ານການເມືອງ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍບ້ານເມືອງຢ່າງເຂັ້ມງວດ;
2. ພາຍໃນຄອບຄົວມີຄວາມສະຫງົບ, ມີຄວາມສາມັກຄີພາຍໃນ ແລະ ພາຍນອກດີ, ເປັນຄອບຄົວປອດສະດີ ແລະ ປອດຢາເສບຕິດ;
3. ເປັນຄອບຄົວພົ້ນທຸກ ແລະ ມີແຫລ່ງລາຍຮັບໝັ້ນຄົງ;
4. ເປັນຄອບຄົວວັດທະນະທຳ;
5. ເປັນຄອບຄົວແບບຢ່າງດ້ານສາທາລະນະສຸກ;
6. ສະມາຊິກທຸກຄົນໃນຄອບຄົວໃນເກນອາຍຸ ໄດ້ສຳເລັດການສຶກສາພາກບັງຄັບ (ຈົບປະຖົມ);
7. ໄດ້ຊົມໃຊ້ໄຟຟ້າ (ຕາຂ່າຍ) ຢ່າງເປັນປົກກະຕິ.



**ມາດຕາ 8. ມາດຕະຖານບ້ານພັດທະນາ**

ບ້ານພັດທະນາ ແມ່ນບ້ານທີ່ບັນລຸມາດຕະຖານ, ເງື່ອນໄຂໃນການພັດທະນາ ດັ່ງນີ້:

1. ລະບົບການຈັດຕັ້ງບ້ານໜັກແໜ້ນ ແລະ ເຂັ້ມແຂງ (ມີໜ່ວຍພັກແຂງຮູ້ນຳພາຮອບດ້ານ);
2. ປະຊາຊົນພາຍໃນບ້ານ ມີຄວາມຕື່ນຕົວທາງດ້ານການເມືອງສູງ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍບ້ານເມືອງ ຢ່າງເຂັ້ມງວດ ແລະ ມີຄວາມສາມັກຄີ ຮັກແພງຊ່ວຍເຫລືອຊຶ່ງກັນ ແລະ ກັນຢ່າງແໜ້ນແຟ້ນ;
3. ເປັນບ້ານປອດສະດີ, ບ້ານປອດຢາເສບຕິດ ແລະ ເປັນບ້ານແບບຢ່າງດ້ານປ້ອງກັນຊາດ - ປ້ອງກັນຄວາມສະຫງົບດີ;
4. ຈຳນວນຄອບຄົວພັດທະນາກວມຫລາຍກວ່າ 85% ຂອງຈຳນວນຄອບຄົວທັງໝົດ ຢູ່ພາຍໃນບ້ານ;
5. ມີສະຫະກອນ ຫລື ກຸ່ມການຜະລິດສິນຄ້າ ແລະ ບໍລິການ, ມີຄັງສະສົມ ຫລື ກອງທຶນຂອງບ້ານ;
6. ມີການຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນຖາວອນ ໃຫ້ແກ່ປະຊາຊົນ;
7. ມີແຜນຜັງບ້ານທີ່ດີ ແລະ ມີການຈັດຕັ້ງປະຕິບັດຕາມແຜນຜັງ;
8. ມີເສັ້ນທາງຄົມມະນາຄົມເຂົ້າເຖິງບ້ານ ທຽວໄດ້ຕະຫລອດປີ;
9. ມີຄອບຄົວໄດ້ຊົມໃຊ້ໄຟຟ້າ (ຕາຂ່າຍ) ຫລາຍກວ່າ 70% ຂອງຈຳນວນຄອບຄົວທັງໝົດ;
10. ໄດ້ປະກາດ ເປັນບ້ານ ສາທາລະນະສຸກແບບຢ່າງ;
11. ໄດ້ປະກາດ ເປັນບ້ານ ສຳເລັດການສຶກສາພາກບັງຄັບ (ຈົບຊັ້ນປະຖົມ);

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:

# ໝວດທີ I
# ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດມາດຕະຖານຄວາມທຸກຍາກ, ມາດຕະຖານການພັດທະນາ, ຂັ້ນຕອນວິທີການ ກ່ຽວກັບ ການຈັດຕັ້ງປະຕິບັດ, ອີງການຮັບຜິດຊອບ, ການສະເໜີ ແລະ ຮັບຮອງ ຄອບຄົວ, ບ້ານ, ເມືອງພົ້ນທຸກ, ຄອບຄົວ, ບ້ານ, ກຸ່ມບ້ານ ແລະ ເມືອງພັດທະນາ ເພື່ອໃຫ້ບັນດາຂະແໜງການ, ຂັ້ນສູນກາງ ແລະ ທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

**ມາດຕາ 2. ຄວາມໝາຍ "ຄວາມທຸກຍາກ" ແລະ "ການພັດທະນາ"**

**ຄວາມທຸກຍາກ** ແມ່ນການຂາດເຂີນປັດໃຈພື້ນຖານ ໃນການດຳລົງຊີວິດປະຈຳວັນຄື: ຂາດເຂີນສະບຽງອາຫານ ທີ່ບໍ່ສາມາດຕອບສະໜອງພະລັງງານ 2100 ກິໂລກາລໍລີ ຕໍ່ຄົນ ຕໍ່ມື້, ຂາດເຂີນເຄື່ອງນຸ່ງຫົ່ມທີ່ຈຳເປັນ, ບໍ່ມີທີ່ຢູ່ອາໄສຖາວອນ, ບໍ່ສາມາດໃຊ້ຈ່າຍປິ່ນປົວເວລາເຈັບເປັນ, ບໍ່ສາມາດໃຊ້ຈ່າຍເຂົ້າໃນການສຶກສາຂັ້ນພື້ນຖານ, ບໍ່ມີເງື່ອນໄຂເຂົ້າເຖິງຕາໜ່າງການບໍລິການພື້ນຖານໂຄງລ່າງທີ່ຈຳເປັນຂອງສັງຄົມ.

**ການພັດທະນາ** ແມ່ນຄວາມສຳເລັດຮອບດ້ານ ໃນການສ້າງສາພັດທະນາ ເຊັ່ນ: ລະບົບການຈັດຕັ້ງມີຄວາມໜັກແໜ້ນເຂັ້ມແຂງ, ປະຊາຊົນມີຄວາມຕື່ນຕົວທາງດ້ານການເມືອງສູງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບໝັກແໜ້ນ, ພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ປະຊາຊົນສາມາດເຂົ້າເຖິງ ການບໍລິການພື້ນຖານທີ່ຈຳເປັນ ແລະ ຫລຸດພົ້ນອອກຈາກຄວາມທຸກຍາກ.



# ໝວດທີ II
# ການກຳນົດມາດຕະຖານຄວາມທຸກຍາກ

**ມາດຕາ 3. ມາດຕະຖານຄວາມທຸກຍາກ ລະດັບບຸກຄົນ**

**ຫົວໜ່ວຍຄິດໄລ່ ມາດຕະຖານຄວາມທຸກຍາກ** ແມ່ນຖືເອົາລາຍຮັບສະເລັ່ຍ ຕໍ່ຄົນຕໍ່ເດືອນ ເປັນຂີດໝາຍ ໂດຍບໍ່ຈຳແນກເພດໄວ ແລະ ຖືເອົາເງິນ ກີບເປັນຫລັກ, ເຊິ່ງໄດ້ກຳນົດດັ່ງນີ້:

1. ສະເລັ່ຍທົ່ວປະເທດ ແມ່ນ 192.000 ກີບ/ຄົນ/ເດືອນ.
2. ສຳລັບເຂດຊົນນະບົດ ແມ່ນ 180.000 ກີບ/ຄົນ/ເດືອນ.
3. ສຳລັບເຂດຕົວເມືອງ ແມ່ນ 240.000 ກີບ/ຄົນ/ເດືອນ.

**ມາດຕາ 4. ມາດຕະຖານຄວາມທຸກຍາກ ລະດັບ ຄົວເຮືອນ**

**ຄົວເຮືອນທີ່ຈັດວ່າທຸກຍາກ** ແມ່ນຄົວເຮືອນທີ່ມີ ລາຍຮັບສະເລັ່ຍ ຄິດໄລ່ເປັນເງິນ ຕໍ່ຄົນ ຕໍ່ເດືອນ ຕ່ຳກ່ວາມາດຕະຖານຄວາມທຸກຍາກທີ່ລະບຸໄວ້ ມາດຕາ 3 ຂອງດຳລັດສະບັບນີ້.

**ມາດຕາ 5. ມາດຕະຖານຄວາມທຸກຍາກ ຂັ້ນບ້ານ**

**ບ້ານທຸກຍາກ** ແມ່ນບ້ານ ທີ່ຂາດເງື່ອນໄຂພື້ນຖານໃນການພັດທະນາ ດັ່ງນີ້:

1. ບ້ານ ທີ່ມີຄົວເຮືອນທຸກຍາກ ກວມ 51% ຂຶ້ນໄປ ຂອງຈຳນວນຄົວເຮືອນທັງໝົດພາຍໃນບ້ານ;
2. ບ້ານ ທີ່ບໍ່ມີໂຮງຮຽນປະຖົມ ຫລື ຖ້າໄປຮຽນຢູ່ໂຮງຮຽນ ທີ່ຢູ່ໃກ້ທີ່ສຸດຕ້ອງໃຊ້ເວລາຍ່າງ ຫລາຍກວ່າ 1 ຊົ່ວໂມງ;
3. ບ້ານ ທີ່ບໍ່ມີຖົງຢາປະຈຳບ້ານ, ຮ້ານຂາຍຢາ ຫລື ຖ້າຈະໄປຫາສຸກສາລາ ຫລື ໂຮງໝໍເມືອງທີ່ໃກ້ທີ່ສຸດຕ້ອງ ໃຊ້ເວລາຍ່າງ ຫລາຍກວ່າ 2 ຊົ່ວໂມງ;